# ມາດຕະການໃນການປ້ອງກັນ ພະຍາດອະຫິວາໄວລັດໄຂ້ຫວັດໝູອະຟຣິກາ ໃນຟາມໝູ

## ຈຸດປະສົງຂອງມາດຕະການປ້ອງກັນຟາມໝູ

1. ເຊື້ອ**ໄວລັດໄຂຫວັດໝູອະຟຣິກາ**ເຂົ້າມາໃນຟາມໄດ້ຜ່ານ**ຜູ້ຖືເຊື້ອ, ລົດລາງພະຫະນະ,ສິນຄ້າ, ແລະ ຜູ້ຄົນ.**
2. ຟາມໝູຈະຕ້ອງໄດ້ຮັບການປ້ອງກັນ ເພື່ອ**ລີກເວັ້ນຈາກການໄດ້ຮັບເຊື້ອໄວລັດ** ຜ່ານ ຜູ້ຖືເຊື້ອ,ລົດລາງພາຫະນະ,ສິນຄ້າ, ແລະ ຜູ້ຄົນ ຕາມຫຼັກ ແແນວຄວາມຄິດທີ່ວ່າ "**ຂອ້ຍຄືຜູ້ປົກປ້ອງຟາມຂອງຕົວເອງ.**"

## 1. ບໍລິເວນອ້ອມ ຮອບຟາມ (ພາກສ່ວນ ນຳເຊື້ອ, ພາຫະນະ, ຜູ້ຄົນ)



ເຮັດຮົ້ວອ້ອມດ້ານນອກຂອງຟາມ,ແລະນໍາໃຊ້ລວດຄືກັນກັບໃຊ້ກັນສັດປ່າອ້ອມຕາມຮົ້ວໜາມໜາກຈັບ.
* ຮົ້ວທີ່ໃຊ້ອ້ອມຮອບຟາມຕ້ອງມີຄວາມສູງ 1.5 ແມັດຫຼືສູງກ່ວານັ້ນ.



ໃຊ້ປູນໂຮຍເປັນທາງຍາວມີຄວາມກ້ວາງປະມານ 50 ຊມ ອ້ອມຟາມ ແລະ ທໍາການຂ້າເຊື້ອຕາມທາງລົດອ້ອມຮອບຟາມຢ່າງເປັນປະຈໍາ.



ຖ້າພົບເຫັນຊາກໝູປ່າ ( ສາກໝູຕາຍ ຫຼື ມີອາກາດເຢົາ )ຢູ່ໃນບໍລິເວນຟາມ, ຈົ່ງລາຍງານກະຊວງຄຸ້ມຄອງສິ່ງແວດລ້ອມຫຼືກົມປ້ອງກັນພະຍາດແຜ່ລະບາດວິທະຍາ.




ຫ້າມນໍາເອົາເຄື່ອງປູກແລະ ລໍາຫ້າໃສ່ຂົດເຂດການແຜ່ລະບາດ(ເນື້ອທີ່ດິນກະສິກໍາ) ທີ່ມີໝູປ່າຢ່າງທ່ອງໂທ່ຟາມທໍາການຜະລິດ.




ຫ້າມອຸປະກອນ (ລົດໄຖນາ,ລົດກ່ຽວເຂົ້າ,ອື່ນໆ) ນໍາໃຊ້ຢູ່ຂ້າງນອກເຂົ້າມາໃນບໍລິເວນຟາມ.




ລົດຂົນສົ່ງສັດທີ່ເຂົ້າອອກຟາມປະຈໍາ.
- ມີການອະເຊື້ອ ຫຼັງຈາກນໍາເອົາຊີວະພິດອອກຈາກລົດແລ້ວ, ເອົາດິນທີ່ຕິດລໍ້ລົດ ແລະ ຊ່ວງລ່າງຂອງລົດ, ແລະ ອະເຊື້ອເບາະນັ່ງຜູ້ຂັບຂີ່ໂດຍການໃຊ້ຢາຂ້າເຊື້ອ.



ອານາໄມບໍລິເວນອ້ອມຮອບຟາມ,ທໍາການອະເຊື້ອເຄື່ອງນຸ່ງເຮັດວຽກ,ໝວກ ,ແລະເກີບໃສ່ທຸກວັນ,ແລະລ້າງພວກມັນໃຫ້ສະອາດທຸກ 2-3ມື້.
* ສືບຕໍ່ກໍາຈັດດ້ານສະພາບແວດລ້ອມອ້ອມຮອບພາຍໃນຮົ້ວ(ຂຸມຂີ້ເຫຍື້ອ,ໜອງນໍ້າ,ພຸ່ມໄມ້, ອື່ນໆ) ເພື່ອປ້ອງກັນຍຸງລາຍ, ແລະເສຍຫຍ້າເປັນປະຈໍາ.




ຫ້າມຄົນທາງນອກເຂົ້າມາພາຍໃນຟາມຍົກເວັ້ນກໍລະນີສັດຕະວັດແພດເຂົ້າມາບໍລິການ.
* ຫ້າມນາພານ ແລະ ຊາວນາ ເຂົ້າສູ່ຟາມ.
* ກໍານົດໃດຍຈັດການຄວບຄຸມປະຕູທາງເຂົ້າ ແລະ ທາງອອກ, ແລະ ອັດກັ້ນປະຕູໂຂງທາງເຂົ້າສູ່ຟາມທັງໝົດ.



ພະນັກງານພາຍໃນຟາມຕ້ອງຫ້າມຫຍຸ້ງກ່ຽວກັບກິດຈະກໍາລ່າສັດ ຫຼື ກ່ຽວຂ້ອງກັບຊາວເຂົາ.
* ຫ້າມເຂົ້າໄກ້ເຂດທີ່ມີຂັດສັດປ່າ,ໜອງນໍ້າ, ຫຼື ເຂດທີ່ດິນຂອງຟາມ ທີມີໝູປ່າອາໃສຢູ່.


농림축산식품부
Ministry of Agriculture, Food and Rural Affairs

Livestock Health Control Association
가축위생방역지원본부

## 2. ບໍລິເວນພາຍ ໃນຟາມ (ພາກສ່ວນ ນຳເຊື້ອ, ພາຫະນະ, ຜູ້ຄົນ)




ຮັກສາຄວາມສະອາດພາຍໃນຟາມ ແລະ ທຳຄວາມສະອາດເປັນປະຈຳ ແລະ ທຳການອະເຊື້ອ ບ່ອນໝັກຝຸ່ນ, ບ່ອນໃສ່ຫົວອາຫານສັດ (ຮາງເກືອໝູ), ໜ່ວຍງານສືບປີງ,ແລະອື່ນໆ.




ການຖິ້ມຂ່ວງສິ່ງເສດເຫຼືອ (ຫົວອາຫານ,ເສດອາຫານ,ຂີ້ແກບ,ເສດເຝືອງ, ອື່ນໆ) ທີ່ອາດຕົກເປັນອາຫານຂອງສັດປ່າ ແລະ ແມງໄມ້ ຖືກເປັນສິ່ງຕ້ອງຫ້າມ.




ຫ້າມຖິ້ມຊາກສັດ,ລູກສັດຕາຍ,ຫຼື ໂຮມນ້ອງສັດ, ອື່ນ.ພາຍໃນ ຫຼື ຖິ້ມບໍລິເວນເຂດໝັກຝຸ່ນ.

* ໃຊ້ເຄື່ອງມືກຳຈັດຊາກສັດຕາຍ ຫຼື ໃຊ້ບໍລິການບໍລິສັດ ເພື່ອຮັບມື ເປັນການປ້ອງກັນບໍ່ໃຫ້ມີການແຜ່ລະບາດ.




ອ້ອມຮົ້ວບໍລິເວນຄູກັ້ນນ້ຳ ແລະ ຮ່ອງນ້ຳ ພາຍໃນຟາມ ແລະ ວາງສາຍໄຟກັ້ນ-ນົກບໍລິເວນບ່ອນບຸ່ມຝຸ່ນ,ສາງເກັບຫົວອາຫານ, ແລະ ສາງເກັບເຟືອງ (ແກບ) ທີ່ຈັດເກັບໃນສາງ.




ຫ້າມນຳສັດລ້ຽງ( ໝາ,ແມວ,ອື່ນໆ )ແລ່ນຫຼິ້ນໃນຟາມ ແລະ ຄວນຈັບຂັບໄວ້ໃນບ່ອນເໝາະສົມພາຍໃນຟາມ.

* ຄຸມຍາມປະຕູທາງເຂົ້າແລະທາງອອກ ເພື່ອປ້ອງກັນພວກມັນເຂົ້າອອກຈາກຟາມ.




ທຳຄວາມສະອາດ ແລະ ຂ້າເຊື້ອ ບັນດາອຸປະກອນຕ່າງໆ ເຊັ່ນ ແຜ່ນລໍ້ຍົກເຄື່ອງທີ່ນຳໃຊ້ຢູ່ພາຍໃນຟາມທຸກວັນ ໂດຍແລະເກັບມ້ຽນ ໃນສາງໃຫ້ເປນລະບຽບຮຽບຮ້ອຍ.

* ທຳການຂ້າເຊື້ອ ແລະ ອະເຊື້ອເປັນປະຈຳ ໂດຍໃຊ້ແສງ ອຸຕາໄວໂອເລັດ (UV) ຕອນເກັບມ້ຽນໃນສາງ.




ຜູ້ຊ່ວຍວຽກຕ້ອງອານາໄມເຄື່ອງມືອຸປະກອນພ້ອມທຳການອະເຊື້ອເຄື່ອງນຸ່ງເຮັດວຽກຂອງພະນັກງານ ແລະຖ້ານວາງເກີບຕ້ອງມີການຂ້າເຊື້ອ ແລະ ວາງຜ້າເຊັດຕີນໄວ້ທາງເຂົ້າເຮັດວຽກອ້ອມຮອບຟາມບັນທຶກການເຂົ້າອອກຂອງຜູ້ຄົນຢ່າງເຂັ້ມງວດ.




ຜູ້ຊ່ວຍວຽກຕ້ອງອານາໄມເຄື່ອງມືອຸປະກອນພ້ອມທຳການອະເຊື້ອເຄື່ອງນຸ່ງເຮັດວຽກຂອງພະນັກງານ ແລະຖ້ານວາງເກີບຕ້ອງມີການຂ້າເຊື້ອ ແລະ ອອກພາຍໃນຟາມ.

* ຫຼັງເຂົ້າອອກຟາມຕ້ອງອາບນ້ຳຫຼືມີການຂ້າເຊື້ອ/ປ່ຽນເຄື່ອງ (ເກີບ), ຄວບຄຸມກິດຈະວັດພາຍໃນຟາມ.

**1588-9060**
**1588-4060**

## 3. ພາຍໃນຄອກ (ພາກສ່ວນ ນຳເຊື້ອ, ສິນຄ້າ, ຜູ້ຄົນ)




ອານາໄມ ແລະ ຂ້າເຊື້ອພາຍໃນຄອກເປັນປະຈຳ.




ຖົມຂຸມພາຍນຄອກ,ກັ້ນແມງໄມ້,ໜູ, ແລະ ແມງວັນ ໂດຍກາງມຸ້ງ ແລະ ຕາໜ່າງກັນແມງໄມ້.

- ຕິດຕັ້ງຕາໜ່າງເພື່ອກັ້ນແມງໄມ້,ກັ້ນນົກ, ອື່ນໆ. ຈາກການລິດລອດເຂົ້າຕາມຊ່ອງທາງ ແລະ ທໍລະບາຍ (ປ່ອງປ່ຽນ).

* ວາງເຈ້ຍກາວຕິດແມງວັນ, ໃສ່ແຮ້ວໜູ, ໄຕ້ໄຟຂ້າແມງໄມ້, ແລະ ວາງຢາຂ້າແມ່ທ້ອງ ແລະ ພົ່ນຢາຂ້າແມງໄມ , ກຳຈັດໜູ ແລະ ແມງວັນ.




ໝູທີ່ນຳມາໃໝ່ ຄວນແຍກໄວ້ຄອກຕ່າງຫາກເພື່ອປ້ອງກັນ ແລະ ຕິດຕາມຢ່າງໃກ້ສິດຈິນກ່ອນພວກມັນຈະຖືເຄື່ອນຍ້າຍໄປຍັງຟາມອື່ນ.




ວັດຖຸຕ່າງໆທີ່ສຳພັດໂດຍກົງກັບໝູ (ສະແລງສີຢາ, ອຸປະກອນສີດນ້ຳເຊື້ອປະສົມພັນທຽມ, ຫົວສີດນ້ຳ, ອື່ນໆ) ຕ້ອງໄດ້ຮັບການອານາໄມ ແລະ ຂ້າເຊື້ອຢ່າງເປັນປະຈຳ, ແລະ ເກັບມ້ຽນໄວ້ໃນສາງຫ້າມນຳອອກໄວ້ຂ້າງນອກສະຊາຍ.




ສ້າງຫ້ອງຢູ່ປ່ອມທາງເຂົ້າຄອກໝູ ເພື່ອໃຫ້ຜູ້ເຂົ້າອອກໄດ້ທຳການປ່ຽນເຄື່ອງແລະເກີບ,ແລະ ໃສ່ຊຸດຫຼືເກີບເຂົ້າສະໜາມ ແລະ ມີບ່ອນລ້າງມືໃຫ້ສະອາດ.

농림축산식품부
Ministry of Agriculture, Food and Rural Affairs

Livestock Health Control Association
가축위생방역지원본부